ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ສັບບທີ ໔໔໕ປພຖຊ/ ໐໗໒໐໐໘**

# ບົດຄວາມ

## ພັກຣັດສັ່ນຄອນ

ກອງປະຊຸມສະພາ ຄັ້ງທີ 5 ຊຸດທີ 6 ທີ່ໄດ້ໄຂຂື້ນ ໃນທ້ອງເດືອນ ກໍຣະກະດາ 2008 ນີ້, ໄດ້ເຮັດໃຫ້ອຳນາດຜເດັດການ ສັ່ນຄອນ, ຕົກທີ່ນັ່ງລຳບາກເຫລືອທີ່ສຸດ! ຍ້ອນການຕື່ນຕົວ... ລຸກຂື້ນມາ ຕໍ່ສູ້ ຕາມແນວທາງສັນຕິວິທີ ຂອງປະຊາຊົນລາວ ຢູ່ທຸກຫົນທຸກແຫ່ງ ໃນທົ່ວປະເທດ. ນອກຈາກນີ້, ຍັງມີອ້າຍເອື້ອຍນ້ອງ ໃນຖັນແຖວ, ນັກຮົບວິຣະຊົນ ແລະຜູ້ນຳຣະດັບສູງ ທີ່ຮັກຊາດ ທັງຫລາຍ ກໍໄດ້ອອກມາເຄື່ອນໄຫວ ຕ້ານອຳນາດຜເດັດການ ຕາມເງື່ອນໄຂຂອງໃຜລາວ ຢ່າງພິດເດືອດ ທີ່ສຸດ.

ພວກເຮົາປະຊາຊົນພັກແລະກຳລັງທັບເສຣີປະຊາທິປະໄຕລາວເຄີຍໄດ້ບອກໃຫ້ ພໍ່ແມ່ພີ່ນ້ອງ ທັງໃນ ແລະນອກປະເທດໃຫ້ຊາບມາແລ້ວ ໃນ website www.laofreedom.com ລົງວັນທີ 20 ທັນວາ 2007 ວ່າ "ສັນຕິວິທີ ໄດ້ ເຂົ້າຢືນຢູ່ປະຕູບ້ານຂອງ ສປປລາວແລ້ວ, ແລະໃນກອງປະຊຸມ ສະພາ ໃນທ້ອງເດືອນກໍຣະກະດາ 2008 ນີ້, ກໍມີຜູ້ແທນປະຊາຊົນ, ຜູ້ກວດກາແຫ່ງຣັດ ແລະຜູ້ ຮັກຊາດ ຄົນອື່ນໆອີກຫລາຍທ່ານ ກໍໄດ້ອອກມາເປີດໂປງ

ເຖິງຄວາມຫລົ້ມເຫລວຂອງພັກຣັດ ໃນການ ບໍຣິຫານ ປະເທດຊາດ ແບບຜເດັດການພັກດຽວ ຢູ່ໃນກອງປະຊຸມສະພາ ຢ່າງເຈັບແສບທີ່ສຸດ!.

ຍ້ອນການປະກາດທ່າທີທາງການເມືອງຢ່າງເອົາຈິງເອົາຈັງ ຂອງທ່ານ ບົວສອນ ບຸບຜາວັນ ນາຍົກຣັຖມົນຕຣີ ຢູ່ ສິງກະໂປ ໃນທ້ອງເດືອນ ພຶສຈິກາ 2007 ວ່າ" ເປົ້າໝາຍຂອງລາວ ແມ່ນເລັ່ງສ້າງ ພລັງງານໄຟຟ້າ, ແຕ່ບໍ່ແມ່ນ ສ້າງປະຊາທິປະໄຕ, ມີແຕ່ສ້າງສັງຄົມນິຍົມ ຄອມມິວນິສຢ່າງດຽວ!." ມັນໄດ້ເຮັດໃຫ້ພັກຣັດ ຕົກເຂົ້າຢູ່ໃນທ່າຮັບ, ຕົກເຂົ້າຢູ່ໃນວົງລ້ອມ ການຕໍ່ສູ້ ຂອງປະຊາຊົນລາວ ແລະບັນດາປະເທດເພື່ອນມິຕ ໃນທົ່ວໂລກ ທີ່ຕ້ອງການ ໃຫ້ຄົນລາວທັງຊາດ ໄດ້ພົບກັບອິສຣະພາບອັນແທ້ຈິງ ແລະສັນຕິສຸຂອັນຍາວນານ, ກໍອອກມາ ເຄື່ອນໄຫວ ບີບຮັດ ໃຫ້ພັກຣັດ ຕ້ອງປ່ຽນຣັຖບານໂດຍໄວ.

ນັບແຕ່ວັນນັ້ນມາ, ຂບວນການຕໍ່ສູ້ ຂອງປະຊາຊົນ ກໍນັບວັນນັບຟົດເດືອດ. ຈາກບ່ອນ ການເຄື່ອນໄຫວຢ່າງງຽບໆ ກໍອອກມາເປີດໂປງ ຢ່າງກ້າຫານ ເປັນຕົ້ນ ປະຊາຊົນຢູ່ໃນແຂວງ ຈໍາປາສັກ ກໍກ່າວປະນາມພັກຣັດ ທີ່ຂາຍດິນໃຫ້ວຽດນາມ ສໍາປະທານ ຊຶ່ງກວມເອົາໄຮ່ນາຮົ້ວສວນ ຂອງປະຊາຊົນໄປ ຫລາຍກວ່າ 10,000 ha. ຢູ່ແຂວງ ວຽງຈັນ, ປະຊາຊົນ ກໍອອກມາ ກ່າວໂຈມຕີພັກຣັດ ທີ່ຂາຍດິນບຶງທາດຫລວງ 100 ປີ ໃຫ້ກັບຈີນ. ນອກຈາກນີ້, ປະຊາຊົນ ໃນແຂວງຫລວງນໍ້າທາ, ຫລວງພຣະບາງ, ອຸດົມໄຊ ແລະຊຽງຂວາງ ກໍເຊັ່ນດຽວກັນ... ກ່າວໂຈມຕີພັກຣັດ ທີ່ອານຸຍາດ ໃຫ້ຈີນ ຫລັ່ງໄຫລເຂົ້າມາສ້າງບັນຫາ, ສ້າງຄວາມຫຍຸ້ງຍາກ ສັບສົນ, ທໍາລາຍສະພາບແວດລ້ອມ,ຕັດໄມ້ ທໍາລາຍປ່າ ຢ່າງຫລວງຫລາຍ ລວມໄປເຖິງ ປ່າສງວນນໍາດ້ວຍ. ນອກຈາກປະຊາຊົນສາມັນທັມະດາແລ້ວ ຍັງມີນັກຣົບວີຣະຊົນ ທີ່ອອກໄປ ກິນເບັ້ຽບໍານານ ເຖົ້າແກ່ຊະຣາ, ຜູ້ເສັຽອົງຄະ ຍ້ອນການສູ້ຣົບ... ພັກຣັດ ກໍບໍ່ໄດ້ໃສ່ໃຈ. ພວກເຂົາ ພາກັນເວົ້າວ່າ "ພັກຣັດ ເປັນຜູ້ເນຣະຄຸນກອງທັບ", ທະຫານຜູ້ຖືກບາດເຈັບ ຢ່າງຫລວງຫລາຍ ກ່ອນການເຂົ້າມາມີອໍານາດ, ພັກຣັດ ກໍສັ່ງໃຫ້ຍິງຖິ້ມໝົດ.. ເພາະຈະເປັນພາຣະ ແບກຫາບ ໃຫ້ພັກຣັດ. ດັ່ງນັ້ນ, ໃນເວລາທີ່ພັກຣັດ ຂຶ້ນຄອງ ອໍານາດ ຈຶ່ງບໍ່ປະກົດເຫັນທະຫານ ເສັຽອົງຄະ ເຂົ້າມາຢູ່ວຽງຈັນເລີຍ.

ນອກຈາກນີ້, ຍັງມີພນັກງານ ໃນຂແນງການຕ່າງໆ ທີ່ເຮັດນໍາອົງການຈັດຕັ້ງສາກົນ ແລະ ເປັນພນັກງານພັກຣັດ, ຕ່າງຄົນ ກໍຕ່າງອອກມາເປີດເຜີຍຄວາມຈິງ ໃນສິ່ງທີ່ບໍ່ຊອບທັມ, ເປັນຕົ້ນ ການ ຂູດຮີດແຮງງານ...ບໍ່ເບີກຈ່າຍເງິນເດືອນເປັນປົກະຕິ, ບໍ່ເອົາໃຈໃສ່ແກ້ໄຂບັນຫາປາກທ້ອງ, ຄວາມທຸກຍາກ ອຶດຫິວຂອງປະຊາຊົນເທົ່າທີ່ຄວນ. ປະປ່ອຍໃຫ້ຊາວວຽດນາມ ແລະຊາວຈີນ ເຂົ້າມາຍາດແຍ່ງອາຊີບ ຂອງພວກເຂົາ.

ການອອກມາກ່າວຍອມຮັບຄວາມຫລົ້ມເຫລວ ໃນການບໍຣິຫານປະເທດຊາດ ຂອງພັກຣັດນີ້, ຍັງກວມໄປເຖິງ ກັມະການສູນກາງພັກອີກ, ເປັນຕົ້ນ: ທ່ານ ອາສ້າງ ລາວລີ, ທ່ານ ພັນໄທ

ດວງໃຈ ພິຈິດ ກໍອອກມາກ່າວ ກ່ຽວກັບຄວາມຫລົ້ມເຫລວ...ບໍ່ມີຄວາມສາມາດ ປາບປາມ ການສໍ້ຣາດບັງຫລວງ ໃຫ້ໝົດລົງໄດ້, ທັງໆທີ່ຮູ້ວ່າ ມີຜົນສະທ້ອນແນວບໍ່ດີ ມາສູ່ຊາດ ແລະປະຊາຊົນ. ທ່ານ ຄໍາອ້ວນ ບຸບຜາ ກໍອອກມາຍອມຮັບວ່າ " ການຕັດໄມ້ທໍາລາຍປ່າ, ການຄ້າໄມ້ເຖື່ອນ, ຂອງຜູ້ມີອໍານາດ ກໍບໍ່ສາມາດ ທີ່ຈະນໍາເອົາຜູ້ກະທໍາຜິດນັ້ນ ມາລົງໂທດໄດ້.

ດຽວນີ້, ພັກຣັດ ຕົກທີ່ນັ່ງລໍາບາກ ເພາະນອກຈາກປະຊາຊົນ ບໍ່ໃຫ້ການສນັບສນູນແລ້ວ, ຄນະພັກຣັດ ກໍບໍ່ມີຄວາມໂປ່ງໃສ ໃນການບໍຣິຫານປະເທດຊາດ, ມີຄວາມຂັດແຍ່ງຜົນປໂຍດກັນຢ່າງໜັກ! ອັນເປັນຕົ້ນເຫດ ໃຫ້ອົງການຈັດຕັ້ງສາກົນ ແລະປະເທດທີ່ໃຫ້ການຊ່ວຍເຫລືອ ຮຽກຮ້ອງ ໃຫ້ພັກຣັດ ສົ່ງຣາຍງານດ່ວນ ກ່ຽວກັບການໃຊ້ຈ່າຍ ເງິນຊ່ວຍເຫລືອຕ່າງໆນັ້ນໂດຍໄວ ກ່ອນທີ່ພວກເຂົາ ຈະໄດ້ລົງໄປພິສູດຄວາມຈິງ ແລະນໍາເອົາຜູ້ກະທໍາຜິດ ມາລົງໂທດ. ດັ່ງນັ້ນ, ບໍ່ເວັ້ນແຕ່ລະວັນ, ຜູ້ຕາງໜ້າ ຂອງອົງການຈັດຕັ້ງສາກົນ ຈຶ່ງໄດ້ເຂົ້າພົບເຈົ້າໜ້າທີ່ ຣະດັບສູງ ຂອງພັກຣັດ ເພື່ອຕິດຕາມ ການປະຕິບັດງານ ຂອງພັກຣັດ ວ່າເປັນໄປຕາມໂຄງການຊ່ວຍເຫລືອນັ້ນ ນ້ອຍຫລາຍພຽງໃດ. ພາຍຫລັງທີ່ ສປປລາວ. ໄດ້ເຊັນ, ຍອມຮັບ, ເຄົາຣົບຕໍ່ສິດທິເສຣີພາບ ຂອງປະຊາຊົນ ຕາມກົດຣະບຽບ ຂອງສະມາຄົມອາຊຽນແລ້ວ, ເມື່ອບໍ່ໆມານີ້, ປະເທດສິງກະໂປ ກໍໄດ້ຮຽກຮ້ອງ ເອົາທ່ານ ຈຸມມະລີ ໄຊຍະສອນ ປະທານປະເທດ ໄປຕັກເຕືອນ ໃຫ້ເຄົາຣົບ ຕໍ່ສິດທິເສຣີພາບ ຂອງປະຊາຊົນ ແລະ ໃຫ້ຫັນປ່ຽນ ຈາກການບໍຣິຫານປະເທດແບບຜເດັດການ ມາເປັນເສຣີໂດຍໄວ.

ອັນນີ້, ຄືບັ້ນອາວະສານ ຂອງອໍານາດຜເດັດການໃນລາວ.

**ສູນກາງຕາງໜ້າ**

**ພັກ ແລະກໍາລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໑໐ ກໍຣະກະດາ ໒໐໐໗.**

**ຄວາມເຫັນໂຄສົກ:**

ພໍ່ແມ່ພີ່ນ້ອງປະຊາຊົນ ແລະບັນດາທ່ານທັງຫລາຍ ຈະໄດ້ເຫັນວ່າ ການຂ້າຍຊາດ, ການສໍ້ຣາດ ບັງຫລວງ, ການຕັດສິດທິເສຣີພາບ ຂອງປະຊາຊົນ ແລະບໍ່ເອົາໃຈໃສ່ນຳບັນຫາ ປາກທ້ອງ, ແກ້ໄຂຊີວິດ ການເປັນຢູ່ຂອງປະຊາຊົນນີ້ ມັນໄດ້ກາຍເປັນເງື່ອນໄຂ ໃຫ້ປະຊາຊົນລາວ ທັງຊາດ ລຸກຂຶ້ນມາຕໍ່ສູ້ ຕາມ ແນວທາງ ສັນຕິວິທີ ໄດ້ຢ່າງພິດເດືອດ, ພາຍໃຫ້ອົງການຈັດຕັ້ງສາກົນ ຫັນໜ້າເຂົ້າມາສົນໃຈ ໃນການ ແກ້ໄຂບັນຫາລາວ ແລະພວກເຂົາ ກໍໄດ້ບີບບັງຄັບ ໃຫ້ພັກຣັດ ເຄົາຣົບຕໍ່ສິດທິເສຣີພາບ ຂອງປະຊາຊົນ ແລະບີບຣັດ ໃຫ້ຫັນປ່ຽນ ຈາກອຳນາດຜເດັດການ ມາເປັນເສຣີໂດຍໄວ. ແນ່ນອນທີ່ສຸດວ່າ, ການ ປ່ຽນແປງ ນີ້ຕ້ອງ ເກີດມີຂຶ້ນ ໃນອະນາຄົດອັນໃກ້ໆນີ້, ເພາະມັນໝົດຍຸກສມັຍ ຂອງການເປັນຂ້າທາດ ຢູ່ພາຍໃຕ້ ອຳນາດ ຜເດັດການອີກແລ້ວ.